# ປ້ອງກັນຊີວິດຂອງທ່ານແລະລູກ ນອຍທານກັບວັກຊີນຕໍ່ຕານໂຣກ ມະເຮັງຊະນິດແລກ

## ທ່ານຄວນສັກຢາວັກຊີນປ້ອງກັນກ່ອນ ເຊື້ອໂຣກມະເຮັງຈະມາເຖິງຕົວທ່ານ

ໂຣກຕັບສາມາດຕິດແປດທາງເພດສຳພັນແລະການຮັບເລືອດຈາກຄົນປ່ວຍແລະໃຊ້ອຸປະກອນຮ່ວມກັນເຊັ່ນມິດແຖແປງຖູແຂ້ວແລະເຂັມສັກຢາ

ການສັ່ກຢາວັກຊີນຕ້ານມະເຮັງ ໓ ຄັ້ງໃນລະຍະ ໖ ເດືອນທ່ານແລະລູກກໍ່ຈະປອດພັຍຈາກມະເຮັງຕັບຕລອດຊີວິດຢາວັກຊິນນີ້ມີຜົນດີທີ່ສດໃນການປ້ອງການໂຣກຕັບບີແລະມະເຮັງໃນຕັບຊຶ່ງເປັນວັກຊິ້ນຕໍ່ຕ້ານໂຣກມະເຮັງຊະນິດແລກໃນໂລກ

## ທ່ານຕ້ອງໃຫ້ລູກນ້ອຍຂອງທ່ານໄດ້ຮັບ ການສັກຢາວັກຊີນຕ້ານໂຣກມະເຮັງຕັບ ໃນເວລາເຂົ້າເກີດ

ນັບຕັ້ງແຕ່ປີ ໑໙໙໑ ເປັນຕົ້ນມາເດັກນ້ອຍເກີດໃໝ່ຢູ່ໃນອະເມຣິກາຕ້ອງສັກຢາວັກຊິນປ້ອງກັນໂຣກຕັບ ໓ ຄັ້ງຕາມກຳນົດເພື່ອລົດຜ່ອນກັບການສ່ຽງຕໍ່ໂຣກມະເຮັງໃນຕັບ

| ອາຍຸ | ເດັກຄວນຮັບ |
|---|---|
| ເວລາເກີດ | ສັກຢາວັກຊີນຄັ້ງທີ່ ໑ |
| ໑-໔ ເດືອນ | ສັກຢາວັກຊີນຄັ້ງ ທີ່ ໔ |
| ໖ ເດືອນ | ສັກຢາວັກຊີນຄັ້ງທີ່ ໓ |

ການສັກຢາປ້ອງກັນນີ້ເດັກນ້ອຍເກີດກ່ອນກຳນົດກໍ່ສັກໄດ້ບໍ່ຕ້ອງຢ້ານວ່າຈະມີອັນຕລາຍ



## ຈົ່ງຮ່ວມມືກັນຕໍ່ຕ້ານໂຣກຕັບປະເພດບີ

ໂບສີຂຽວ Jade Ribbon ເປັນສັນຍາລັກໃນການຮ່ວມມືກັບໂຄງການປຸກລະດົມຕໍ່ສູ້ການແຜ່ຂຫຍາຍຂອງພະຍາດມະເຮັງໃນຕັບທົ່ວໂລກ



ລາຍລະອຽດກະຣຸນາຕິດຕໍ່

http://liver.stanford.edu

**Asian Liver Center**
**at Stanford University**
490 S. California Ave, Suite 300
Palo Alto, CA 94306
Tel: 1-888-311-3331
Fax: (650) 566-8863

Lao Edition
Translated by Laotian American National Alliance (LANA)

© 2010 Asian Liver Center



# ແມ່ລູກນ້ອຍແລະອັນຕລ້າຍຈາກໂຣກຕັບ



## ແມ່ລູກນ້ອຍແລະອັນຕລາຍຈາກໂຣກຕັບ

- ໂຣກຕັບປະເພດບີແມ່ນນຶ່ງໃນຈຳນວນພະຍາດຕິດແປດຮ້າຍແຮງທີ່ເຮັດໃຫ້ຄົນຕາຍກ່ອນເວລາອັນຄວນຈາກມະເຮັງໃນຕັບຫຼືຕັບວາຍ
- ໃນອະເມຣິກາ ໑-໑໕ ຄົນເສັຍຊີດທຸກໆມື້ຍ້ອນພະຍາດນີ້
- ໑ ໃນ ໑໐ ຂອງຄົນລາວທີ່ມີໂຣກຕັບປະເພດນີ້ສ່ວນຫຼາຍບໍ່ຮູ້ສຶກເລີຍວ່າຕົນເອງມີພະຍາດຢູ່ໃນຕົວ
- ສຳລັບຄົນລາວການແຜ່ລະບາດຂອງພະຍາດນີ້ແມ່ນເລີ່ມຈາກແມ່ທີ່ມີໂຣກຕັບເຮື້ອຮັງສູ່ລູກໃນເວລາເດັກນ້ອຍເກີດ
- ໗໐% ຂອງເດັກນ້ອຍທີ່ເກີດຈາກແມ່ທີ່ມີໂຣກຕັບຈະມີໂຣກຕັບຢູ່ໃນຮ່າງກາຍຕລອດຊີວິດ

ໂຊກດີທາງການແພດໄດ້ຄົ້ນພົບຢາທີ່ມີປະສິດທິພາບສູງແລະສາມາດຊ່ວຍປ້ອງກັນໂຣກຕັບປະເພດບີໄດ້

## ຈົ່ງສອບຖາມໝໍສຳລັບຜົນການກວດເລືອດຫາເຊື້ອໂຣກຕັບບີ

ຄົນສ່ວນຫຼາຍບໍ່ຮູ້ສຶກເລີຍວ່າຕົນເອງມີເຊື້ອໂຣກຕັບບີຢູ່ໃນຕົວໃນເວລາທີ່ທ່ານກຳລັງຈະເປັນແມ່ໃໝ່ນັ້ນທ່ານຄວນໄດ້ຮັບການກວດເລືອດຫາເຊື້ອໂຣກຕັບບີດັ່ງນີ້:

- **ຄວນກວດເລືອດຫາໄວຣັສໂຣກຕັບບີແອນຕິເຈນ (HBsAg)** ເພື່ອບອກວ່າທ່ານມີໂຣກຕັບບີເຮື້ອຮັງ (ຫຼືເປັນຜູ້ນຳເຊື້ອໄວຣັສຕັບບີ)

# ສຳລັບທ່ານຍິ່ງທີ່ມີລູກນ້ອຍຫຼືກຳລັງຈະໃຫ້ກຳເນີດແກ່ລູກນ້ອຍຄວນໃຊ້ຄວາມຣະມັດຣະວັງເປັນພິເສດ

## ເວລາຕັ້ງຄັນຫຼືຖືພາມານ:

ຕາມທຳມະດາທ່ານໝໍຈະບໍ່ແນະນຳໃຫ້ທ່ານສັກແອນຕິໄວຣັສອັກເສບບີເວລາທ່ານຕັ້ງທ້ອງຫຼືຖືພາຖ້າທ່ານໄດ້ສັກຢານີ້ແລ້ວທ່ານຕ້ອງບອກໃຫ້ໝໍຮູ້

## ເວລາເດັກເກີດໃໝ່:

ເດັກນ້ອຍທີ່ເກີດໃໝ່ຄວນໄດ້ຮັບການສັກຢາວັກຊິນຕ້ານໂຣກຕັບບີແລະໄວຣັສຕັບອັກເສບອີມມູໂນໂກລບູລິນ (HBIG) ຕາມລາຍການດັ່ງນີ້

| ອາຍຸ | ເດັກທີ່ເກີດຈາກແມ່ທີ່ມີໄວຣັສຕັບບີຕ້ອງຮັບ |
|---|---|
| **ເວລາເກີດ** | ສັກຢາວັກຊິນປ້ອງກັນໂຣກຕັບ ແລະ ໄວຣັສຕັບອັກເສບອີມມູໂນໂກລບູລິນ **(HBIG)** |
| ອາຍຸ ໑-໔ ເດືອນ | ສັກຢາວັກຊິນປ້ອງກັນຄັ້ງທີ່ ໔ |
| ອາຍຸ ໖ ເດືອນ | ສັກຢາວັກຊິນປ້ອງກັນໂຣກຕັບຄັ້ງທີ່ ໖ |
| **ອາຍຸ ໙-໑໘ ເດືອນ** | **ກວດເລືອດຫາ HBsAg ແລະ anti-HBs* ເພື່ອແນ່ນອນວ່າ ເດັກນ້ອຍໄດ້ສັກຢາປ້ອງກັນແລ້ວ** |

*ການກວດເລືອດຫາໄວຣັສໂຣກຕັບບີແອນຕິບໍດີ້ (anti-HBs) ເພື່ອທົດສອບວ່າທ່ານມີພູມຄຸ້ມກັນຕໍ່ເຊື້ອໄວຣັສຕັບບີ

ການໃຫ້ກຳເນີດໂດຍການຜ່າຕັດຍັງບໍ່ປອດພັຍຢ່າງໃດກໍ່ຕາມການໃຫ້ເດັກນ້ອຍເກີດໃໝ່ສັກວັກຊິນປ້ອງກັນໂຣກຕັບບີແລະໄວຣັສຕັບອັກເສບອີມມູໂນໂກລບູລິນຈະຊ່ວຍລູກຂອງທ່ານປອດພັຍຕໍ່ໂຣກມະເຮັງຕັບຕລອດຊີວິດ

## ເມື່ອເດັກນ້ອຍອາຍຸ ໖ ເດືອນ:

ທ່ານຕ້ອງເອົາໄປສັກຢາວັກຊິນໃຫ້ຄົບແລະໃຫ້ຖືກເວລາຕາມແພດສັ່ງປະມານ ໙໕% ຂອງເດັກນ້ອຍທີ່ປະຕິບັດຕາມນີ້ຈະປອດພັຍຈາກໂຣກມະເລັງຕັບຕລອດຊີວິດ ການລ້ຽງລູກດ້ວຍນ້ຳນົມແມ່ປອດພັຍທີ່ສຸດເພາະພະຍາດຕັບບີບໍ່ຕິດຕໍ່ທາງນົມແມ່

# ແມ່ທີ່ມີເຊື້ອໂຣກຕັບບີເຮື້ອຮັງຢູ່ແລ້ວ

## ຢ່າລືມເຂົ້າຮັບການກວດຫາໂຣກຕັບ

ແມ່ທີ່ມີມະເຮັງຕັບເຮື້ອຮັງຢູ່ແລ້ວສຳຄັນທີ່ສຸດເພາະທ່ານເປັນຜູ້ຮັບຜິດຊອບໃນອະນາຄົດແລະສຸຂພາບຂອງລູກແລະຂອງທ່ານເອງພຽງແຕ່ທ່ານປຶກສາໝໍກວດສຸຂພາບແລະສັກຢາປ້ອງກັນໃຫ້ຖືກເວລາຕາມແພດສັ່ງທ່ານກໍ່ຈະປອດພັຍຈາກມະເລັງນີ້ເຖິງທ່ານຈະມີສຸຂພາບແຂງແຮງກໍ່ຕາມຄວນກວດສຸຂພາບດັ່ງນີ້:

| ທຸກໆ | ການກວດ | ກວດຫາ |
|---|---|---|
| ໖ ເດືອນ | ກວດເລືອດ ALT<br>ກວດເລືອດ AFP | ຕັບທີ່ຖືກທຳລາຍ<br>ມະເຮັງໃນຕັບ |
| ໑ ປີ | ອັລຕຣາຊາວນ໌ | ມະເຮັງໃນຕັບ |

## ຢ່າຮີບຮ້ອນໃນການຮັກສາ

ຜູ້ມີເຊື້ອໂຣກຕັບບີບໍ່ຈຳເປັນຈະຕ້ອງຮັບການຮັກສາທຸກໆຄົນຖ້າລະດັບ ALT ຂອງຜູ້ປ່ວຍຂຶ້ນສູງຜູ້ປ່ວຍຄວນຮັບຢາຕ້ານໄວຣັສທີ່ເໝາະສົມຄວນສອບຖາມໝໍກ່ຽວກັບວິທີການຮັກສາທຸກສະນິດທີ່ມີການຮັບຮອງຈາກທາງການແພດເພາະຢາບາງຈໍ່າຢ່າງອາດທຳຮາຍຕັບຂອງທ່ານໄດ້

## ສັກຢາວັກຊິນປ້ອງກັນເຊື້ອໂຣກຕັບເອ

## ຫຼີກລ້ຽງການດື່ມສຸຣາ

## ປ້ອງກັນຄົນທ່ານຮັກ

ຄວນພາສະມາຊິກໃນຄອບຄົວຂອງທ່ານໄປກວດຫາເຊື້ອໂຣກຕັບບີແລະຮັບການສັກຢາວັກຊິນປ້ອງກັນຖ້າພົບວ່າພວກເຂົາຍັງບໍ່ມີພູມຕ້ານທານຜແນກສາທາລະນະສຸຂທ້ອງຖິ່ນອາດຈະຕິດຕໍ່ຫາທ່ານເພື່ອຄວາມແນ່ໃຈວ່າລູກຂອງທ່ານປອດພັຍຈາກເຊື້ອໂຣກຕັບບີ